ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 011 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 06 ມີນາ 2018

ສຳນັກງານ ຄຄຊ
ເລກທີ 258
ວັນທີ 07 MAR 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 19-23/02/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,75% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ. ອາເມລິກາ ອອກມາດີ ເປັນຕົ້ນແມ່ນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດຫຼຸດລົງຈາກ 230.000 ຄົນ ໃນອາທິດຜ່ານມາ ມາເປັນ 222.000 ຄົນ ຂອງອາທິດທີ 17/02/2018 ແລະ ຕົວເລກດັດຊະນີຊີ້ນຳພາວະເສດຖະກິດຂອງເດືອນ 01/2018 ເພີ່ມຂຶ້ນ 0,6% ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 12-16/02/2018 | ອາທິດນີ້ 19-23/02/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2526 | 1,2310 | 1,75% |
| ເຢນ/ໂດລາ | 106,01 | 106,87 | -0,80% |
| ບາດ/ໂດລາ | 31,26 | 31,45 | -0,60% |
| ເປໂຊ/ໂດລາ | 52,23 | 51,73 | 0,97% |
| ຣູເປັຍ/ໂດລາ | 13.557,00 | 13.665,00 | -0,79% |
| ໂດລາສິງກະໂປ/ໂດລາ | 1,3071 | 1,3225 | -1,16% |
| ຢວນ/ໂດລາ | 6,3438 | 6,3340 | 0,15% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນຫຼຸດລົງ 1,41% ຈາກ 61,85 ໂດລາ/ບາເຣວ ມາເປັນ 60,98 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສ.ອາເມລິກາ ເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງເພີ່ມຂຶ້ນຈຳນວນ 0,26 ລ້ານບາເຣວ ຂອງອາທິດທີ 16/02/2018;

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

- ສໍາລັບລາຄາຄໍາຫຼຸດລົງ 2,35% ຈາກ 1.360,15 ໂດລາ/ອອນ ມາເປັນ 1.328,25 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາ ແລ້ວຫັນມາຖືຄອງເງິນໂດລາສະຫະລັດແທນ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,22% ແຕ່ແຂງຄ່າຂຶ້ນ 0,43% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,07% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,36% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 16/02/2018 | | | ອາທິດນີ້ 23/02/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.281,55 | 8.305,00 | 8.288,79 | 8.292,86 | 8.314,98 | 8.306,67 | -0,14% | -0,12% | -0,22% | 0,10% | 0,14% | 0,07% |
| ບາດ | 265,21 | 266,88 | 266,18 | 264,14 | 265,70 | 265,05 | 0,41% | 0,44% | 0,43% | -3,44% | -3,36% | -3,36% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ຫຼຸດລົງ 1,16% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12,34%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,39% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,57%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (16-22/02/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 11,72 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 26,69 ລ້ານໂດລາ ແລະ ຂາຍໂດລາໄດ້ 14,97 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 399,25 ລ້ານບາດ (ໃນນີ້ຊື້ບາດໄດ້ 232,05 ລ້ານບາດ ແລະ ຂາຍບາດໄດ້ 631,30 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາຫຼຸດລົງ 47,50% ແຕ່ເງິນບາດເພີ່ມຂຶ້ນ 1,35%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາ ຈາກທະນາຄານທຸລະກິດ ຈໍານວນ 0,50 ລ້ານໂດລາ ແຕ່ເງິນບາດແມ່ນບໍ່ມີການເຄື່ອນໄຫວຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 8,72 ລ້ານໂດລາ ແລະ ເງິນບາດ ຈໍານວນ 183,60 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09-15/02/2018 | | ອາທິດນີ້ 16-22/02/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **48,55** | **174,85** | **26,69** | **232,05** | **-45,03%** | **32,71%** |
| - ທ/ຄທຸລະກິດລັດ | 13,05 | 65,20 | 10,35 | 66,95 | -20,69% | 2,68% |
| - ທ/ຄທຸລະກິດອື່ນໆ | 35,50 | 109,65 | 16,34 | 165,10 | -53,97% | 50,57% |
| **2. ການຂາຍເງິນຕາຕ່າງປະເທດ** | **30,80** | **677,03** | **14,97** | **631,30** | **-51,40%** | **-6,75%** |
| - ທ/ຄທຸລະກິດລັດ | 17,80 | 101,12 | 4,49 | 195,64 | -74,78% | 93,47% |
| - ທ/ຄທຸລະກິດອື່ນໆ | 13,00 | 575,91 | 10,48 | 435,66 | -19,38% | -24,35% |
| ຊື້-ຂາຍສຸດທິທທກ | **17,75** | **-502,18** | **11,72** | **-399,25** | **-33,97%** | **-20,50%** |
| - ຜົດດ່ຽງຊື້-ຂາຍ | 36,56% | -287,21% | 43,91% | -172,05% | 20,10% | -40,10% |
| **- ມູນຄ່າການຊື້-ຂາຍ** | **79,35** | **851,88** | **41,66** | **863,35** | **-47,50%** | **1,35%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **0,00** | **0,00** | **0,50** | **0,00** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,50 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 0,00 | 0,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **11,55** | **39,80** | **8,72** | **183,60** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 02/2018 ຄາດວ່າຈະຢູ່ໃນລະດັບ 0,99% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນໍາໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເຂົ້າເງິນຕາຕ່າງປະເທດໃນອາທິດນີ້ເພີ່ມຂຶ້ນ 34,4% ທຽບໃສ່ອາທິດຜ່ານມາ ໂດຍມີຈໍານວນ 40,47 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 40,5% ທຽບໃສ່ອາທິດຜ່ານມາ ໂດຍມີຈໍານວນ 58,24 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ຈໍານວນ 872 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 526 ສະບັບ ເທົ່າກັບ 37,62% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 361,93 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 177,95 ຕື້ກີບ ເທົ່າກັບ 32,96% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (16-22/02/2018) ມີທັງໝົດ 3.025 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 2.989 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈໍານວນ 379,31 ຕື້ກີບ ຈາກ 1.238,49 ຕື້ກີບ ມາເປັນ 859,18 ຕື້ກີບ ເທົ່າກັບ 30,62%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 36 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າຫຼຸດລົງຈໍານວນ 24,48 ຕື້ກີບ ຈາກ 37,11 ຕື້ກີບ ມາເປັນ 61,59 ຕື້ກີບ ເທົ່າກັບ 65,96%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 939,22 ຈຸດ ຫຼຸດລົງ ຈາກ 964,79 ຈຸດ ຫຼື ເທົ່າກັບ 2,65% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 414.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,91 ຕື້ກີບ ຫຼຸດລົງ 16,44% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 61,71% ຂອງມູນຄ່າການ ຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| BCEL | 382.400 | 2.193.770.000 | 5.700 | **76.600** | **442.180.000** | **5.800** | -79,97 | -79,84 | 100 | 1,75 |
| EDL-GEN | 20.300 | 93.200.000 | 4.600 | **331.100** | **1.463.975.000** | **4.400** | 1.531,03 | 1.470,79 | -200 | -4,35 |
| LWPC | - | - | 6.600 | **100** | **720.000** | **7.200** | - | - | 600 | 9,09 |
| PTL | 3.400 | 6.840.000 | 2.000 | **3.200** | **6.400.000** | **2.000** | -5,88 | -6,43 | - | 0,00 |
| SVN | 100 | 290.000 | 2.900 | **100** | **290.000** | **2.900** | - | - | - | 0,00 |
| PCD | 600 | 900.000 | 1.500 | **2.900** | **4.100.000** | **1.500** | 383,33 | 355,56 | - | 0,00 |
| ທັງໝົດ | 406.800 | 2.295.000.000 | | **414.000** | **1.917.665.000** | | 1,77 | -16,44 | | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມ: ❶ ກອງປະຊຸມກະກຽມຄວາມພ້ອມທາງດ້ານຂະບວນການສຳລັບການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❷ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກຸມພາ 2018 ທີ່ (ຫສນຍ), ❸ ກອງປະຊຸມການຈັດຕັ້ງຜັນຂະຫຍາຍຜົນສຳເລັດການດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ອົງຄະນະພັກ ທຫລ ທີ່ (ທຫລ), ❹ ກອງປະຊຸມປຶກສາຫາລືກະກຽມວຽກງານປະເມີນຜົນປະຈຳປີການປະຕິບັດວຽກງານຂອງພະນັກງານ ທຫລ ປະຈຳປີ 2017 ທີ່ (ທຫລ), ❺ ກອງປະຊຸມສະພາບໍລິຫານ ທພລ ຄັ້ງປະຖົມມະລຶກ ທີ່ (ທະນາຄານພັດທະນາລາວ) ແລະ ❻ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ);
- ສຳເລັດບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ແລະ ແຜນການລົງທຶນຂອງລັດໝົດປີ 2017 ທີ່ຕິດພັນກັບ ທຫລ;
- ສຳເລັດການຕ້ອນຮັບການມາເຮັດວຽກຂອງຄະນະຫ້ອງວ່າການສູນກາງພັກ ທີ່ (ທຫລ).

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມສ່ອງແສງລາຍງານປະຈຳເດືອນ ກຸມພາ 2018 ຕໍ່ຄະນະເລຂາທິການສູນກາງພັກ ທີ່ (ສຳນັກງານສູນກາງພັກ), ❷ ກອງປະຊຸມຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮທີ່ຖືກຈັດຊັ້ນຂອງ ທະນາຄານທຸລະກິດ ສະບັບປັບປຸງ ທີ່ (ທຫລ), ❸ ກອງປະຊຸມຄົບຄະນະ

ເປີດກວ້າງຄະນະກຳມະທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ປະຈຳປີ 2017 ທີ່ (ຫ້ອງປະຊຸມແຫ່ງຊາດ), ❹ ກອງປະຊຸມຄະນະຊີ້ນຳລວມ (IOSCO) ຊຸດໃໝ່ ຄັ້ງທີ 1 ທີ່ (ສຄຄຊ), ❺ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍ ທຫລ (ສະບັບປັບປຸງ) ກັບກະຊວງຍຸຕິທຳ ທີ່ (ທຫລ), ❻ ກອງປະຊຸມທົບທວນຄືນການຮ່ວມມືລະຫວ່າງ ສປປ ລາວ ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຢູ່ ສປປ ລາວ (NIGOs) ທີ່ (ຫ້ອງປະຊຸມແຫ່ງຊາດ) ແລະ ❼ ກອງປະຊຸມກະກຽມໄປຖອດຖອນບົດຮຽນຢູ່ ສປ. ຈີນ (ວຽກ CDB) ທີ່ (ທຫລ).

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ